ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ກະຊວງອຸດສາຫະກຳແລະການຄ້າ

ເລກທີ:1786 /ອຄ

ນະຄອນຫລວງວຽງຈັນ,ວັນທີ 7 ກັນຍາ 2009

# <u>ຄຳແນະນຳເພີ່ມເຕີມ</u>

ຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກຳແລະການຄ້າ

ກ່ຽວກັບການແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ

<u>ເຖິງ</u> : - ພະແນກອຸດສາຫະກຳແລະການຄ້າ ແຂວງ ແລະ ນະຄອນຫລວງ.

- ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ໃນຂອບເຂດທົ່ວປະເທດ.

<u>ເລື່ອງ</u> : ດັດແກ້ເພີ່ມເຕີມບາງເນື້ອໃນຄຳແນະນຳເລກທີ0995/ອຄ, ລົງວັນທີ19 ມິຖຸນາ 2008

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ່ 11/ສພຊ, ລົງວັນທີ່ 9 ພະຈິກ 2005.
- ອີງຕາມດຳລັດ,ສະບັບເລກທີ່ 188/ນຍ,ລົງວັນທີ່ 17 ສິງຫາ 2006,ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ແລະ ບັນດານິຕິກຳທີ່ກ່ຽວຂ້ອງ ກັບການແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ຕາມຄຳແນະນຳເລກທີ0995/ອຄ, ລົງວັນທີ19 ມິຖຸນາ 2008 ສັງເກດເຫັນໄດ້ວ່າ ແຂວງ ຈຳນວນໜຶ່ງກໍສາມາດປະຕິບັດໄດ້ຢ່າງຖືກຕ້ອງ,ແຕ່ກໍຍັງມີຫຼາຍແຂວງຍັງບໍ່ທັນເຂົ້າໃຈ ຢ່າງເລິກເຊິ່ງກ່ຽວກັບເນື້ອໃນທີ່ສຳຄັນຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ຈຸດປະສົງທີ່ຢາກໄດ້ຢູ່ໃນແບບຟອມ ເພື່ອນຳໃຊ້ຊອບແວຣ,ລະບົບເຊື່ອມຕໍ່ໃນການປ້ອນຂໍ້ມູນເຂົ້າໃນລະບົບຖານຂໍ້ມູນແຫ່ງຊາດກ່ຽວກັບຫົວໜ່ວຍວິສາຫະກິດໃຫ້ຖືກຕ້ອງ ພ້ອມນັ້ນກໍຍັງມີຄວາມສັບສົນກ່ຽວກັບການແບ່ງຄວາມຮັບຜິດຊອບ ລະຫວ່າງພະແນກ ແລະ ຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ ໃນການຄຸ້ມຄອງ ຫັນຈາກລະບົບວິທີການຄວບຄຸມຫຼາຍກວ່າການສົ່ງເສີມເພື່ອຫັນປ່ຽນມາເປັນລະບົບ,ວິທີການການຄຸ້ມຄອງ, ຕິດຕາມສົ່ງເສີມ, ຊຸກຍູ້ໃຫ້ຫົວໜ່ວຍວິສາຫະກິດໄດ້ຮັບການພັດທະນາ ແລະ ການຈັດຕັ້ງປະຕິບັດການເກັບແລະນຳໃຊ້ລາຍຮັບວິຊາການ ຈາກການຈຳໜ່າຍແບບຟອມຕ່າງໆ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳເພີ່ມເຕີມດັ່ງນີ້ :

I./<u>ດັດແກ້ບາງເນື້ອໃນທີ່ໄດ້ກຳນົດໄວ້ໃນຂໍ້ທີ I ຂອງຂໍ້1.6 ຄຳແນະນຳເລກທີ0995/ອຄ,ລົງວັນທີ19ມິຖຸນາ2008</u>

ຂະແໜງອຸດສາຫະກຳ ແລະ ການຄ້າ ໄດ້ຕັ້ງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ເພີ່ມຕື່ມອີກໜຶ່ງແຫ່ງຕັ້ງຢູ່ພະແນກອຸດສາຫະກຳແລະການຄ້ານະຄອນຫລວງວຽງຈັນ ເພື່ອຮອງຮັບໃຫ້ແກ່ບັນດາຜູ້ປະກອບການທຸລະກິດ ແລະ ຫົວໜ່ວຍວິສາຫະກິດໃຫ້ມີຫຼາຍທາງເລືອກໃນການມາແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ທີ່ມີທີ່ຕັ້ງໃນຂອບເຂດ ນະຄອນຫລວງວຽງຈັນ, ປະຈຸບັນທົ່ວປະເທດມີຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດລວມທັງໝົດ 18ຈຸດ, ດັ່ງນັ້ນ,ເພື່ອຈັດຕັ້ງປະຕິບັດວຽກງານຕາມລະບົບສາຍຕັ້ງຂອງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ມີສິດ

ແລະພາລະບົດບາດໃນການເຄື່ອນໄຫວກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ, ຈຶ່ງໄດ້ດັດແກ້ເພີ່ມເຕີມ ດັ່ງນີ້ :

ກ. <u>ຂັ້ນກະຊວງ :</u> ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຕັ້ງຢູ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳແລະການຄ້າ ມີສິດແລະໜ້າທີ່ ເປັນສູນລວມຮັບບໍລິການແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ,ສູນລວມການຈອງຊື່ວິສາຫະກິດໃນຂອບເຂດທົ່ວປະເທດ ແລະ ເປັນສູນລວມລະບົບຖານຂໍ້ມູນ ແຫ່ງຊາດກ່ຽວກັບຫົວໜ່ວຍວິສາຫະກິດ ທີ່ກຳນົດໄວ້ໃນຂໍ້ກ ຂອງຂໍ້1.6 ແລະ ຍັງມີໜ້າທີ່ເພີ່ມເຕີມຕາມທີ່ໄດ້ກຳນົດໄວ້ໃນຂໍ້ ຄ ແລະ ງ ລຸ່ມນີ້ .

ຂ. <u>ຂັ້ນແຂວງແລະນະຄອນຫລວງ</u> : ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຕັ້ງຢູ່ພະແນກອຸດສາຫະກຳແລະການຄ້າແຕ່ລະແຂວງແລະນະຄອນຫລວງ ມີສິດແລະໜ້າທີ່ ໃນການບໍລິການຮັບແຈ້ງຂຶ້ນ ແລະດັດແກ້ທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ ຂ ໃນຂໍ້1,2,3,6ແລະ7 ຂອງຂໍ້1.6.

ສ່ວນຂໍ້ 4 , ຂໍ້ 5 ຂອງຂໍ້1.6 ໃຫ້ຕັດແກ້ ແລະ ໃຫ້ປະຕິບັດຕາມຂໍ້ ຄ ແລະ ງ ລຸ່ມນີ້ .

ຄ. <u>ການກຳນົດກິດຈະການແລະສາຂາ,ຮ້ານຈຳໜ່າຍແລະບ່ອນດຳເນີນທຸລະກິດ.</u>

ຫົວໜ່ວຍວິສາຫະກິດໃດ ແຈ້ງມີສາຂາ,ຮ້ານຈຳໜ່າຍ,ບ່ອນດຳເນີນທຸລະກິດ(ໂຮງງານ,ບ່ອນຜະລິດ,ອື່ນໆ) ທີ່ກ່ຽວຂ້ອງກັບກິດຈະການດຳເນີນທຸລະກິດ ໃຫ້ລະບຸໃສ່ດ້ານຫຼັງຂອງໃບທະບຽນວິສາຫະກິດ,ຖ້າເນື້ອທີ່ດ້ານຫຼັງໃບທະບຽນວິສາຫະກິດບໍ່ພຽງພໍ ໃຫ້ນຳໃຊ້ຮ່າງແບບຟອມໃບທະບຽນວິສາຫະກິດ ເຮັດເປັນເອກະສານຄັດຕິດຊ້ອນທ້າຍ.

ງ. <u>ການອອກໃບຮັບຮອງຊື່ວິສາຫະກິດ.</u>

ການອອກໃບຮັບຮອງຊື່ແລະແຈ້ງຕອບປະຕິເສດການຈອງຊື່ວິສາຫະກິດ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນແຂວງແລະນະຄອນຫລວງວຽງ ຈະອອກໃບຮັບຮອງຊື່ວິສາຫະກິດໄດ້ ກໍຕໍ່ເມື່ອໄດ້ຮັບໃບອະນຸມັດຈອງຊື່ຈາກຫ້ອງການທະບຽນວິສາຫະກິດຂັ້ນກະຊວງ .

<u>II / ແນະນຳເພີ່ມເຕີມໃສ່ຂໍ້ ຄ ຂອງຂໍ້1.6 ໜ້າທີ່ຂອງຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ</u>

ໃຫ້ຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ ຄົ້ນຄວ້າແຕ່ງຕັ້ງພະນັກງານເປັນຜູ້ປະສານງານກັບຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນກະຊວງ ຫຼື ນະຄອນຫລວງ(ສຳລັບຢູ່ນະຄອນຫລວງວຽງຈັນ) ແລະປະສານກັບຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນແຂວງ. ຖ້າເມືອງໃດມີການ ສ້າງຕັ້ງໜ່ວຍບໍລິການຜ່ານລະບົບປະຕູດຽວ ຕາມທີ່ໄດ້ກຳນົດໄວ້ໃນດຳລັດເລກທີ86/ນຍ,ລົງວັນທີ3/7/2007 ກໍໃຫ້ແຕ່ງຕັ້ງຜູ້ປະສານງານປະກອບເຂົ້າໃນໜ່ວຍງານດັ່ງກ່າວ ເພື່ອເຮັດໜ້າທີ່ຮັບບໍລິການແຈ້ງຂຶ້ນແລະດັດແກ້ ທະບຽນວິສາຫະກິດ ແລະຫ້ອງການອຸດສາຫະກຳແລະການຄ້າເມືອງ ຍັງມີໜ້າທີ່ເພີ່ມເຕີມລະອຽດດັ່ງນີ້ :

ກ.<u>ການໂຄສະນາເຜີຍແຜ່ບັນດານິຕິກຳ</u>

ຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ ຕ້ອງເອົາໃຈໃສ່ໃນການໂຄສະນາເຜີຍແຜ່ບັນດານິຕິກຳ ທີ່ກ່ຽວຂ້ອງກັບການແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ ອອກສູ່ສາທາລະນະຊົນດ້ວຍຫຼາຍຮູບການ,ຮູບແບບ ໃຫ້ນັບມື້ນັບກວ້າງຂວາງ ເພີ່ມທະວີຂຶ້ນເລື້ອຍໆ.

ຂ.<u>ການນຳໃຊ້ຮ່າງແບບຟອມແຕ່ລະຮູບການ,ຮູບແບບ,ການແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ</u>

ການນຳໃຊ້ຮ່າງແບບຟອມຄຳຮ້ອງແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ຈະໄດ້ມາ ດ້ວຍຮູບການໃດກໍ່ຕາມຕ້ອງປະກອບເອກະສານ ແລະ ຕື່ມເນື້ອໃນໃສ່ແບບຟອມໃຫ້ ຖືກຕ້ອງຄົບຖ້ວນກ່ອນ ຈຶ່ງຮັບເອົາສຳນວນເອກະສານຢ່າງເປັນທາງການ ແລະແບບຟອມແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ຂອງແຕ່ລະຮູບການ,ຮູບແບບ ວິສາຫະກິດ ໃຫ້ຈຳໜ່າຍ1ຊຸດຕໍ່1ຫົວໜ່ວຍ ແລະ ຫົວໜ່ວຍວິສາຫະກິດໜຶ່ງໃຫ້ມີ1ຊຸດເປັນຕົ້ນສະບັບ(ມີກາແດງ) ແລະ ສາມາດກອບປີ້ສ້າງສຳເນົາເປັນຫຼາຍຊຸດກໍ່ໄດ້,ຖ້າຫາກແບບຟອມໃດບໍ່ມີກາປະທັບແດງເປັນຕົ້ນສະບັບຂອງ ຫຈທ ໃດໜຶ່ງຫຼື ກາປະທັບຂອງຫ້ອງການອຸດສາຫະກຳແລະການຄ້າເມືອງຫຼືກາປະທັບຂອງໜ່ວຍງານ

ບໍລິການຜ່ານລະບົບປະຕູດຽວຂັ້ນເມືອງໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນທີ່ຂຶ້ນທະບຽນວິສາຫະກິດ ເກັບຄ່າແບບຟອມຕາມລະບຽບການ.

ຄ. **<u>ສະຖານທີ່ແລະການບໍລິການຈັດສົ່ງເອກະສານ ແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ</u>**

ການຄຸ້ມຄອງຈັດຕັ້ງປະຕິບັດໃນການຮັບບໍລິການຄຳຮ້ອງແຈ້ງຂຶ້ນແລະດັດແກ້ທະບຽນວິສາກິດ ໃຫ້ແກ່ບັນດາຫົວໜ່ວຍວິສາຫະກິດແລະຜູ້ທີ່ມີຈຸດປະສົງ ຢາກສ້າງຕັ້ງວິສາຫະກິດ ຢູ່ໃນຂອບເຂດທົ່ວປະເທດ ໃຫ້ປະຕິບັດດ້ວຍ 3 ວິທີການດັ່ງນີ້ :

1. ສາມາດຍື່ນນຳຫ້ອງການອຸດສາຫະກຳແລະການຄ້າເມືອງ ຫຼື ໜ່ວຍບໍລິການຜ່ານລະບົບປະຕູດຽວທີ່ມີຢູ່ຂັ້ນເມືອງ ທີ່ຮັບບໍລິການສະເພາະແຕ່ຜູ້ທີ່ມາຍື່ນເອກະສານແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ. ໃນກໍລະນີຫ້ອງການອຸດສາຫະກຳແລະການຄ້າຢູ່ຂັ້ນເມືອງ ຈະລົງເຮັດບໍລິການຢູ່ກັບທີ່ ຕ້ອງມີແຜນການເພື່ອຈັດຕັ້ງປະຕິບັດເປັນແຕ່ລະບ້ານ ແລະ ແຈກຢາຍແບບຟອມ, ພ້ອມທັງແນະນຳການປະກອບແລະຕື່ມເນື້ອໃນໃສ່ຮ່າງແບບຟອມໃຫ້ຖືກຕ້ອງຄົບຖ້ວນແລ້ວຈຶ່ງເກັບກຳສັງລວມໃຫ້ມີຈຳນວນທີ່ເໝາະສົມເພື່ອນຳສົ່ງໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນກະຊວງ,ຂັ້ນແຂວງຫຼືນະຄອນຫລວງ ເພື່ອຂຶ້ນແລະດັດແກ້ທະບຽນວິສາຫະກິດ ຕາມລະບຽບການ.

2. ຜູ້ປະກອບການ ຫຼື ຫົວໜ່ວຍວິສາຫະກິດ ລ້ວນແຕ່ມີສິດມາຍື່ນຄຳຮ້ອງດ້ວຍຕົນເອງ ຫຼື ມອບສິດໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ມາແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດໂດຍກົງນຳຫ້ອງການ ເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ວິສາຫະກິດຕັ້ງຢູ່ ຕາມການແບ່ງຂັ້ນຄຸ້ມຄອງ.

3. ຜູ້ປະກອບການ ຫຼື ຫົວໜ່ວຍວິສາຫະກິດ ທີ່ມີທີ່ຕັ້ງສຳນັກງານຂອງວິສາຫະກິດໃນຂອບເຂດທົ່ວປະເທດລ້ວນແຕ່ມີສິດມາຍື່ນຄຳຮ້ອງດ້ວຍຕົນເອງ ຫຼື ມອບສິດໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນ ມາແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດໂດຍກົງນຳຫ້ອງການ ເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນສູນກາງ ຕັ້ງຢູ່ກົມການຄ້າພາຍໃນ,ກະຊວງອຸດສາຫະກຳແລະການຄ້າ.

## <u>III./ການຄຸ້ມຄອງຈັດຕັ້ງປະຕິບັດແລະນຳໃຊ້ເງິນລາຍຮັບຈາກການຈຳໜ່າຍແບບຟອມ</u>

### 3.1 <u>ການສົ່ງເສີມ,ຄຸ້ມຄອງ,ຕິດຕາມ,ກວດກາການເຄື່ອນໄຫວຂອງບັນດາຫົວໜ່ວຍວິສາຫະກິດ</u>

ການສົ່ງເສີມ,ຄຸ້ມຄອງ,ຕິດຕາມ,ກວດກາການເຄື່ອນໄຫວດຳເນີນທຸລະກິດ ຂອງບັນດາຫົວໜ່ວຍວິສາຫະກິດທີ່ມີທີ່ຕັ້ງສຳນັກງານ,ສາຂາ,ຮ້ານຈຳໜ່າຍ,ບ່ອນດຳເນີນທຸລະກິດ(ໂຮງງານ,ບ່ອນຜະລິດ,ອື່ນໆ) ທີ່ມີຢູ່ໃນຂອບເຂດແຂວງ,ນະຄອນຫລວງ, ຕັ້ງຢູ່ເມືອງໃດ ໃຫ້ຫ້ອງການເຈົ້າໜ້າທີ່ກວດກາການຄ້າ ຂັ້ນແຂວງ, ນະຄອນ ຫລວງ ສົມທົບກັບ ຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງຕິດຕາມການເຄື່ອນໄຫວຂອງບັນດາຫົວໜ່ວຍວິສາຫະກິດໃຫ້ຂຶ້ນປ້າຍວິສາຫະກິດ ສຳເລັດພາຍໃນ20ວັນ ພາຍຫຼັງໄດ້ຂຶ້ນທະບຽນວິສາຫະກິດ,ປ້າຍວິສາຫະກິດຕ້ອງໃຫ້ຖືກຕາມໃບທະບຽນວິສາຫະກິດ,ລະບຸເລກລະຫັດທະບຽນວິສາຫະກິດ,ເລກທີທະບຽນວິສາຫະກິດ,ທີ່ຕັ້ງ ສຳນັກງານ,ເບີໂທລະສັບ,ແຟກ,ອີເມລ ແລະ ພື້ນປ້າຍຕ້ອງເປັນສີເຫຼືອງ,ຕົວໜັງສືສີແດງ (ສຳລັບວິສາຫະກິດເອກະຊົນ) ແລະ ພື້ນສີຂາວ,ຕົວໜັງສືສີແດງ (ສຳລັບບໍລິສັດລັດແລະບໍລິສັດປະສົມ).

ປ້າຍວິສາຫະກິດໃຫ້ຕິດໃສ່ບ່ອນທີ່ເໝາະສົມຢູ່ດ້ານໜ້າຂອງສຳນັກງານ,ຕົວໜັງສືໃຫ້ຂຶ້ນຕົ້ນດ້ວຍພາສາລາວ ແລະ ຕາມດ້ວຍພາສາສາກົນ,ຂະໜາດຂອງຕົວໜັງສືໃຫ້ເໝາະສົມກັບຂະໜາດຂອງປ້າຍ ແລະ ສາມາດອ່ານໄດ້ໃນໄລຍະ30ແມັດ ແລະ ປ້າຍວິສາຫະກິດ ບໍ່ໃຫ້ເອົາເນື້ອໃນອື່ນແລະການໂຄສະນາອື່ນໆມາປົນເປໃສ່ນຳ(ໃຫ້ເປັນປ້າຍວິສາຫະກິດສະເພາະ). ຖ້າພົບເຫັນຫົວໜ່ວຍທຸລະກິດທີ່ການເຄື່ອນໄຫວດຳເນີນທຸລະກິດບໍ່ມີທະບຽນວິສາຫະກິດ,ບໍ່ຖືກຕ້ອງຕາມການອະນຸຍາດໄວ້ໃນໃບທະບຽນວິສາຫະກິດ ໃຫ້ປະຕິບັດດັ່ງນີ້ :

ຄັ້ງທີ່ໜຶ່ງ : ໃຫ້ສຶກສາອົບຮົມ,ແນະນຳຕັກເຕືອນ ພ້ອມທັງບັນທຶກມີຫຼັກຖານພິຍານແລະແຈ້ງເປັນລາຍລັກອັກສອນ.

- ຄັ້ງທີສອງ : ຖ້າມີການລະເມີດຝ່າຝືນບໍ່ປະຕິບັດຕາມການແນະນຳຕັກເຕືອນ ທີ່ເຫັນວ່າຂັດຕໍ່ລະບຽບກົດໝາຍ ໃຫ້ປັບໃໝແຕ່ 200.000.ກີບ ຫາ 10.000.000.ກີບ, ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນມາດຕາ 236,237,240,241,242ແລະ 243 ຂອງກົດໝາຍວ່າດ້ວຍວິສາຫະກິດ.

- ຖ້າແມ່ນການດຳເນີນທຸລະກິດຢູ່ໃນການຄຸ້ມຄອງຂອງຂະແໜງການກ່ຽວຂ້ອງອື່ນ ໃຫ້ແຈ້ງຫາຂະແໜງການດັ່ງກ່າວ ເພື່ອປະສານສົມທົບແລະຈັດຕັ້ງປະຕິບັດຕາມລະບຽບການຂອງຂະແໜງການກ່ຽວຂ້ອງກຳນົດໄວ້.

3.2 <u>ການຄຸ້ມຄອງແລະນຳໃຊ້ເງິນລາຍຮັບວິຊາການ</u>

ກ. ການຄຸ້ມຄອງແລະອະນຸມັດນຳໃຊ້

ການຄຸ້ມຄອງ ແລະ ນຳໃຊ້ເງິນລາຍຮັບວິຊາການທີ່ໄດ້ກຳນົດໄວ້ໃນມາດຕາ64 ຂອງລັດຖະບັນຍັດສະບັບ ເລກທີ03/ປປລ ຈາກການຈັດພິມແລະຄ່າຈຳໜ່າຍແບບຟອມຄຳຮ້ອງແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ຕາມ ແຕ່ລະຮູບການ,ຮູບແບບວິສາຫະກິດ ແລະ ຄ່າພິມໃບທະບຽນວິສາຫະກິດ, ໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂື້ນແຜນຈັດພິມ,ການເກັບຄ່າຈຳໜ່າຍແລະລາຍຈ່າຍ ວິຊາການທີ່ຈະນຳໃຊ້ເຂົ້າ ໃນແຜນການເຄື່ອນໄຫວວຽກງານ ໂດຍສົມທົບໃສ່ແຜນການ ການນຳໃຊ້ງົບປະມານປະຈຳປີ ເພື່ອຂໍອະນຸມັດຕົກລົງຕາມເງື່ອນໄຂຂອງ ແຕ່ລະຂັ້ນດັ່ງນີ້ :

- ຫ້ອງການເຈົ້າໜ້າທີ່ທະບຽນທະບຽນວິສາຫະກິດ ຂັ້ນກະຊວງແມ່ນການຕົກລົງເຫັນດີອະນຸມັດນຳໃຊ້ໂດຍລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າຕາມການສະເໜີຂອງຫົວໜ້າກົມການຄ້າພາຍໃນ.

- ຫ້ອງການເຈົ້າໜ້າທີ່ທະບຽນທະບຽນວິສາຫະກິດ ຂັ້ນ ແຂວງ ແລະ ນະຄອນຫລວງ ແມ່ນການຕົກລົງເຫັນດີ ອະນຸມັດນຳໃຊ້ ໂດຍຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫລວງ ຕາມການສະເໜີຂອງຫົວໜ້າຂະແໜງການຄ້າພາຍໃນ.

- ຫ້ອງການອຸດສາຫະກຳແລະການຄ້າ ຂັ້ນເມືອງ ແມ່ນຕາມການຕົກລົງເຫັນດີ ອະນຸມັດນຳໃຊ້ໂດຍຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງຕາມການສະເໜີຂອງຜູ້ປະສານງານ

ຖ້າເມືອງໃດມີຜູ້ປະສານງານຂອງຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ ແຕ່ງຕັ້ງໄປປະຈຳຢູ່ໜ່ວຍບໍລິການຜ່ານລະບົບປະຕູດຽວ ຂັ້ນເມືອງ ແມ່ນຫົວໜ້າໜ່ວຍງານເປັນຜູ້ຕົກລົງອະນຸມັດນຳໃຊ້ ຕາມການຕົກລົງເຫັນດີຂອງການຈັດຕັ້ງດັ່ງກ່າວ.

ຂ.<u>ການນຳໃຊ້ເງິນຄ່າຈຳໜ່າຍແບບຟອມເຂົ້າໃນວຽກງານ</u>

ລາຍຮັບວິຊາການທີ່ໄດ້ຈາກການຈັດພິມ,ຈຳໜ່າຍແບບຟອມຄຳຮ້ອງ,ຄ່າພິມໃບທະບຽນວິສາຫະກິດ ແຕ່ລະຮູບການຮູບແບບ ໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ຂຶ້ນທະບຽນວິສາຫະກິດ ເກັບຄ່າພິມແບບຟອມລວມທັງພິມໃບທະບຽນວິສາຫະກິດ ຈຳນວນ3ໃບລວມເປັນເງິນ30.000.ກີບ ຕໍ່ໜຶ່ງຫົວໜ່ວຍວິສາຫະກິດ ເພື່ອເປັນຕົ້ນທຶນ ສືບຕໍ່ໃນການຈັດພິມຮ່າງແບບຟອມໃບທະບຽນວິສາຫະກິດ. ສຳລັບຄ່າໃຊ້ຈ່າຍໃນການຈັດສົ່ງມາແຈ້ງຂຶ້ນຫຼື ດັດແກ້ທະບຽນວິສາຫະກິດ ໃຫ້ພາກສ່ວນທີ່ນຳສົ່ງເປັນຜູ້ຮັບຜິດຊອບ, ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ຂຶ້ນທະບຽນວິສາຫະກິດ ຮັບຜິດຊອບໃນການໃຊ້ຈ່າຍໃນການຈັດສົ່ງຄືນ. ສ່ວນຈຳນວນທີ່ເຫຼືອໃຫ້ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານດັ່ງນີ້ :

1. <u>ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນກະຊວງ</u>

ການຮັບຄຳຮ້ອງແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ຂອງຜູ້ປະກອບການທຸລະກິດຫຼືບັນດາຫົວໜ່ວຍທຸລະກິດທີ່ໄດ້ຈັດສົ່ງມາຈາກຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນແຂວງ,ນະຄອນຫລວງວຽງຈັນ ຫາ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນກະຊວງໃຫ້ປະຕິບັດດັ່ງນີ້ :

| ລ/ດ | ລາຍການແບບຟອມແຕ່ລະຮູບການ, ຮູບແບບ ຂອງວິສາຫະກິດ | ລວມຄ່າແບບຟອມທັງໝົດ (ກີບ) | ໃບນີ້ໃຫ້ເກັບຢູ່ : | |
|---|---|---|---|---|
| | | | ພຈທ ຂັ້ນແຂວງ, ນະຄອນ | ພຈທ ຂັ້ນກະຊວງ |
| 1 | - ວິສາຫະກິດສ່ວນບຸກຄົນ | 40.000 | 10.000 | 30.000 |
| 2 | - ບໍລິສັດຈຳກັດຜູ້ດຽວ | 80.000 | 50.000 | 30.000 |
| 3 | - ວິສາຫະກິດຮຸ້ນສ່ວນ,ບໍລິສັດ, ລວມທັງບໍລິສັດລັດແລະບໍລິສັດປະສົມ | 90.000 | 60.000 | 30.000 |

2. ຫ້ອງການເຈົ້າໜ້າທີ່ທະບຽນກິດ ແລະ ຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ

ການສົ່ງຄຳຮ້ອງແຈ້ງຂື້ນຫຼືດັດແກ້ທະບຽນວິສາຫະກິດ ຂອງຜູ້ປະກອບການທຸລະກິດຫຼືບັນດາຫົວໜ່ວຍທຸລະກິດທີ່ໄດ້ນຳສົ່ງມາຈາກບັນດາຫ້ອງການອຸດສາຫະກຳແລະການຄ້າຂັ້ນເມືອງ ຫຼື ໜ່ວຍງານບໍລິການຜ່ານລະບົບປະຕູດຽວ ທີ່ມີຢູ່ຂັ້ນເມືອງ (ຜູ້ປະສານງານ) ສົ່ງຫາ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນກະຊວງ, ແຂວງ, ນະຄອນ ໃຫ້ປະຕິບັດດັ່ງນີ້ :

| ລ/ດ | ລາຍການແບບຟອມແຕ່ລະຮູບການ,ຮູບແບບ ຂອງວິສາຫະກິດ | ລວມຄ່າແບບຟອມທັງໝົດ (ກີບ) | ໃບນີ້ໃຫ້ເກັບຢູ່ : | |
|---|---|---|---|---|
| | | | ຂັ້ນເມືອງ | ພຈທ ຂັ້ນກະຊວງ, ແຂວງ,ນະຄອນຫຼວງ |
| 1 | - ວິສາຫະກິດສ່ວນບຸກຄົນ | 40.000 | 10.000 | 30.000 |
| 2 | - ບໍລິສັດຈຳກັດຜູ້ດຽວ | 80.000 | 50.000 | 30.000 |
| 3 | - ວິສາຫະກິດຮຸ້ນສ່ວນ,ບໍລິສັດ, ລວມທັງບໍລິສັດລັດແລະບໍລິສັດປະສົມ | 90.000 | 60.000 | 30.000 |

## IV ການຈັດຕັ້ງປະຕິບັດການເກັບຄ່າທຳນຽມທະບຽນວິສາຫະກິດ

ເພື່ອຈັດຕັ້ງປະຕິບັດກ່ຽວກັບການເກັບຄ່າທຳນຽມໃບທະບຽນວິສາຫະກິດ ແນ່ໃສ່ເພື່ອເຮັດໃຫ້ການປະຕິບັດມາດຕາ 9 ຂອງດຳລັດ03/ປປທ,ລົງວັນທີ 19 ພະຈິກ 2008 ໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດແຕ່ລະຂັ້ນເຮັດສະໂນດນຳສົ່ງແຈ້ງຈຳນວນ ຕົວເລກການເກັບຄ່າທຳນຽມຂຶ້ນທະບຽນວິສາຫະກິດຂອງຫົວໜ່ວຍວິສາຫະກິດຕາມແຕ່ລະຮູບການ,ຮູບແບບ ສົ່ງໃຫ້ຂະແໜງການເງິນບ່ອນທີ່ຂຶ້ນທະບຽນອາກອນເພື່ອໃຫ້ເກັບເງິນຄ່າທຳນຽມຕົວຈິງລວມສູນຢູ່ບ່ອນດຽວ. ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ມີໜ້າທີ່ໃນການສະຫລຸບລາຍງານເປັນເດືອນ, ງວດ ແລະ ປີ ໃຫ້ຂະແໜງການເງິນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ,ກວດກາການຈັດຕັ້ງປະຕິບັດການເກັບຄ່າທຳນຽມໃຫ້ສອດຄ່ອງຕາມລະບຽບການກຳນົດໄວ້.

## V./ ລະບົບການລາຍງານສະຖິຕິເຂົ້າລວມສູນຖານຂໍ້ມູນຫົວໜ່ວຍວິສາຫະກິດແຫ່ງຊາດ

ໃຫ້ເພີ່ມທະວີໃນການຈັດຕັ້ງປະຕິບັດໃນການເກັບກຳສັງລວມ ສະຖິຕິຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນແລະດັດແກ້ທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ງ່ອຍຂໍ້1.5 ຄຳແນະນຳເລກທີ0995/ອຄ ນຳສົ່ງໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຕັ້ງຢູ່ກົມການຄ້າພາຍໃນ,ກະຊວງອຸດສາຫະກຳແລະການຄ້າ ເພື່ອເປັນສູນລວມ, ສັງລວມເຂົ້າໃນລະບົບຖານຂໍ້ມູນແຫ່ງຊາດກ່ຽວກັບຫົວໜ່ວຍວິສາຫະກິດ,ທີ່ໄດ້ຂຶ້ນແລະດັດແກ້ທະບຽນວິສາຫະກິດແລ້ວຢູ່ໃນຂອບເຂດທົ່ວປະເທດແລະໃຫ້ເປັນຂໍ້ສ່ວນໜຶ່ງໃນການ ອອກວາລະສານທາງເອັບໄຊ້ ແລະ ຮູບການອື່ນໆອອກສູ່

ສາທາລະນະຊົນ, ດັ່ງນັ້ນ ຈຶ່ງມີຄວາມຈຳເປັນໃນການຕອບສະໜອງຂໍ້ມູນ ເພື່ອໃຫ້ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນແຂວງ, ນະຄອນຫລວງ ເອົາໃຈໃສ່ສະຫຼຸບ,ສັງລວມລາຍງານເປັນແຕ່ລະເດືອນ,ງວດແລະປີ ຕາມເງື່ອນໄຂດັ່ງນີ້ :

1. ທຈທ ແຂວງທີ່ໄດ້ຕິດຕັ້ງຊອບແວຣ ແລະ ລະບົບເຊື່ອມຕໍ່ແລ້ວ,ໃຫ້ກວດກາຄືນແຕ່ລະຄັ້ງກ່ອນຈະຈັດສົ່ງຕາມລະບົບ ແລະ ໃຫ້ສົ່ງ(Upload)ໃນທຸກໆຕອນແລງວັນສຸກປະຈຳອາທິດ.
2. ທຈທ ແຂວງທີ່ມີຄອມພິວເຕີແລະໄດ້ຕິດຕັ້ງຊອບແວຣກ່ຽວກັບການຄຸ້ມຄອງທະບຽນວິສາຫະກິດແລ້ວ,ແຕ່ຍັງບໍ່ທັນ ໄດ້ຕິດຕັ້ງລະບົບເຊື່ອມຕໍ່,ໃຫ້ອັດໃສ່ລະບົບແຜ່ນຊີດີ ນຳສົ່ງໃນທຸກໆເດືອນ.
3. ທຈທ ແຂວງທີ່ມີຄອມພິວເຕີແຕ່ຍັງບໍ່ທັນມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້1ແລະ2ເທິງນີ້ ກໍໃຫ້ຈັດພິມດ້ວຍການນຳໃຊ້ (Font Saysettha OT) ໃນການສະຫຼຸບລາຍງານໃຫ້ຖືກຕ້ອງຕາມຕາຕະລາງທີ່ໄດ້ກຳນົດໄວ້ ດ້ວຍການອັດໃສ່ແຜ່ນຊີດີ,ເຄື່ອງ USB ຫຼື ຈັດພິມເປັນເອກະສານຈັດສົ່ງໃຫ້ກໍໄດ້.

## VI./ ການຈັດຕັ້ງປະຕິບັດ

- ມອບໃຫ້ກົມການຄ້າພາຍໃນ,ບັນດາພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ເພີ້ມທະວີໃນການຊີ້ນຳ ບັນດາຫ້ອງການເຈົ້າໜ້າທີ່ກວດກາການຄ້າ ສົມທົບຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ຫ້ອງການອຸດສາຫະກຳແລະການຄ້າເມືອງ ແລະ ປະສານພົວພັນກັບຫ້ອງການບໍລິການປະຕູດຽວຂັ້ນເມືອງ (ຖ້າມີ) ໃນຂອບເຂດທົ່ວປະເທດເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີປະສິດທິຜົນ.
- ບັນດາຂະແໜງການທີ່ມີສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.
- ບັນດາບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດ ທີ່ເປັນການລົງທຶນຂອງລັດ, ເອກະຊົນພາຍໃນ, ຕ່າງປະເທດ ແລະ ຕ່າງປະເທດປະສົມພາຍໃນ ຕ້ອງປະຕິບັດໃຫ້ສອດຄ່ອງຕາມຄຳແນະນຳເພີ້ມເຕີມສະບັບນີ້ ຢ່າງເຂັ້ມງວດ.
- ຄຳແນະນຳສະບັບນີ້ໄດ້ເພີ້ມເຕີມ,ປັບປຸງປ່ຽນແປງບາງຂໍ້ ຂອງຄຳແນະນຳ ສະບັບເລກທີ 0995/ອຄ, ລົງວັນທີ19ມິຖຸນາ 2008.

## VII./ ຜົນສັກສິດ

ຄຳແນະນຳເພີ້ມເຕີມສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳແລະການຄ້າ

ດຣ. ນາມ ວິຍະເກດ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ " ເພື່ອລາຍງານ "
- ກລບ " ເພື່ອລາຍງານ "
- ທະບວງການປົກຄອງ " ເພື່ອລາຍງານ "
- ກະຊວງການເງິນ " ເພື່ອລາຍງານ "
- ບັນດາກົມອ້ອມຂ້າງກະຊວງ " ເພື່ອຮັບຊາບ "
- ກົມການຄ້າພາຍໃນ " ເພື່ອຈັດຕັ້ງປະຕິບັດ "
- ພະແນກອຸດສາຫະກຳ ແລະການຄ້າ ແຂວງ ແລະ ນະຄອນຫລວງ " ເພື່ອຈັດຕັ້ງປະຕິບັດ "
- ຫ້ອງການອຸດສາຫະກຳ ແລະການຄ້າເມືອງ " ເພື່ອຈັດຕັ້ງປະຕິບັດ "
- ສຳເນົາ.